ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 14 ຫາ 18 ຕຸລາ 2024



ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕ້ອນຮັບການເຂົ້າຢ້ຽມຢາມ
ຂອງລັດຖະມົນຕີກະຊວງປ່າໄມ້ ສ. ເກົາຫຼີ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕ້ອນຮັບການເຂົ້າຢ້ຽມຢາມ ຂອງລັດຖະມົນຕີກະຊວງປ່າໄມ້ ສ.ເກົາຫຼີ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນຕອນບ່າຍວັນທີ 9 ຕຸລາ 2024 ທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ໃຫ້ກຽດຕ້ອນຮັບການເຂົ້າຢ້ຽມຢາມພົບປະ ຂອງ ທ່ານ ລີມ ຊັງຊອບ (LIM Sang-seop) ລັດຖະມົນຕີ ກະຊວງປ່າໄມ້ ສ. ເກົາຫຼີ ພ້ອມດ້ວຍຄະນະການພົບປະຄັ້ງນີ້ ແມ່ນເນື່ອງໃນໂອກາດການເດີນທາງມາເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ໃນວັນທີ 10 ຕຸລາ 2024 ແລະ ພິທີເຊັນບົດບັນທຶກຮ່ວມມືດ້ານວຽກງານ REDD+ ກ່ຽວກັບການຈັດຕັ້ງປະຕິບັດ ສົນທິສັນຍາປາຣີທີ່ທຳນຽບປະທານປະເທດ, ການພົບປະຄັ້ງນີ້ ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ຂອງ ສປປ ລາວ ໄດ້ຍົກໃຫ້ເຫັນຄວາມສຳຄັນ, ການຈັດຕັ້ງປະຕິບັດ, ຄວາມຮັບຜິດຊອບຕໍ່ກັບວຽກງານປ່າໄມ້ໃນຂະແໜງການ, ການຄຸ້ມຄອງປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ການເພີ່ມຄວາມປົກຫຸ້ມຂອງປ່າໄມ້ ລວມທັງບັນດາແຜນງານຫຼັກຂອງກະຊວງກະສິກຳ ແລະ ປ່າໄມ້ ທີ່ກຳລັງຈັດຕັ້ງປະຕິບັດຢູ່ໃນປັດຈຸເປັນ, ທ່ານ ລີມ ຊັງຊອບ ລັດຖະມົນຕີ ກະຊວງປ່າໄມ້ ສ. ເກົາຫຼີ ໄດ້ກ່າວວ່າ ນັບແຕ່ປີ 2013 ເປັນຕົ້ນມາ ກະຊວງກະສິກຳ ແລະ ປ່າໄມ້ ສປປ ລາວ ແລະ ກະຊວງປ່າໄມ້ແຫ່ງ ສ. ເກົາຫຼີ ໄດ້ມີລົງນາມໃນບົດບັນທຶກຄວາມເຂົ້າໃຈ ໃນກອບການຮ່ວມມືດ້ານການຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ເຮັດ

ໃຫ້ປ່າໄມ້ ຊຸດໂຊມ ໂດຍລັດຖະບານ ສ. ເກົາຫຼີ ໄດ້ໃຫ້ການສະໜັບສະໜູນດ້ານງົບປະມານ ເພື່ອຈັດຕັ້ງປະຕິບັດໂຄງການພັດທະນາສິນເຊື່ອກາກບອນ ຊຶ່ງຜ່ານການຈັດຕັ້ງປະຕິບັດບັນດາໂຄງການເຫຼົ່ານັ້ນໄດ້ເປັນບາດກ້າວທີ່ສຳຄັນ ລະຫວ່າງ 2 ປະເທດໃນການຮ່ວມມືດ້ານການສົ່ງເສີມກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້, ໂດຍທ່ານໄດ້ສະແດງຄວາມປິຕິຍິນດີຕໍ່ກັບການມາຢ້ຽມຢາມພົບປະ ແລະ ປຶກສາຫາລືກັບກະຊວງກະສິກຳ ແລະ ປ່າໄມ້ ຂອງ ສປປ ລາວ ດ້ານວຽກງານປ່າໄມ້ ຄັ້ງນີ້ ແລະ ເຊື່ອໝັ້ນວ່າ 2 ປະເທດຈະຮ່ວມກັນສືບຕໍ່ການປະກອບສ່ວນໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.

ໃນຕອນທ້າຍຂອງການພົບປະ ທ່ານ ລິນຄຳ ດວງສະຫວັນ ລັດຖະມົນ ຕີກະຊວງກະສິກຳ ແລະ ປ່າໄມ້ ຍັງໄດ້ສະແດງຄວາມຍິນດີທີ່ການຮ່ວມມືສອງຝ່າຍຈະມີໃບໜ້າໃໝ່ໂດຍສະເພາະໃນຂົງເຂດວຽກງານປ່າໄມ້ ແລະ ສະແດງຄວາມດີໃຈທີ່ຈະເກີດມີໂຄງການໃໝ່ໆເກີດຂຶ້ນພາຍຫຼັງການເຊັນສັນຍານີ້ ແລະ ດີໃຈເປັນຢ່າງຍິ່ງທີ່ໄດ້ຮັບຮູ້ວ່າ ສປປ ລາວ ໄດ້ຮັບການພິຈາລະນາການ ກ່ຽວກັບການຈະຊ່ວຍເຫຼືອດ້ານລິດດັບໄຟປ່າຈາກຂອງ ສ. ເກົາຫຼີ ໃນອະນາຄົດເຊິ່ງເປັນຜົນອັນເນື່ອງມາຈາກການຮ່ວມມື 2 ຝ່າຍຂອງພວກເຮົາ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;